# ວິທີລົງຄະແນນ

ໃນການເລືອກຕັ້ງ (Primary Election) ເດືອນມິຖຸນາ 2022 ແຫ່ງລັດຄາລິຟໍເນຍ

## ກຽມພ້ອມ

ຖ້າທ່ານລົງທະບຽນລົງບຽນແລ້ວ, ເຂົ້າໄປທີ່ voterstatus.sos.ca.gov ເພື່ອກວດສອບວ່າຂໍ້ມູນຂອງທ່ານຖືກຕ້ອງ ຫຼືບໍ່:
- ກວດເບິ່ງທີ່ຢູ່ເຮືອນ ແລະ ທີ່ຢູ່ອີເມວຂອງທ່ານ
- ລົງທະບຽນເພື່ອຮັບເອກະສານການເລືອກຕັ້ງໃນພາສາທີ່ທ່ານຕ້ອງການທາງໄປສະນີ ຫຼື ອີເມວ

ຖ້າທ່ານບໍ່ໄດ້ລົງທະບຽນ, ທ່ານສາມາດລົງທະບຽນອອນລາຍທີ່ registertovote.ca.govຫຼື ຮັບຟອມທີ່ DMV, ຫ້ອງການໄປສະນີ, ຫໍສະມຸດ, ຫລື ຫ້ອງການເລືອກຕັ້ງໃນຄາວຕີ້ (county) ຂອງທ່ານ. ທ່ານຍັງສາມາດລົງທະບຽນຈົນກວ່າວັນເລືອກຕັ້ງ.

## ທາງເລືອກ 1 - ລົງຄະແນນຢູ່ເຮືອນ

ຖ້າທ່ານລົງທະບຽນລະຫວ່າງວັນທີ 23 ພຶດສະພາ, ທ່ານຈະໄດ້ຮັບບັດລົງຄະແນນທາງໄປສະນີ. ຕື່ມບັດລົງຄະແນນຂອງທ່ານ, ເອົາມັນໃສ່ໃນຊອງຈົດໝາຍທີ່ໃຫ້ມາ ແລະ ເຊັນ, ລົງວັນທີ ແລະ ປິດຊອງຈົດໝາຍ.




ທ່ານສາມາດສົ່ງກັບຄືນບັດລົງຄະແນນທາງໄປສະນີ. ບໍ່ຕ້ອງຕິດສະແຕມ! ຕ້ອງໝັ້ນໃຈວ່າມັນຖືກປະທັບຕາເຄື່ອງໝາຍໄປສະນີກ່ອນວັນສຸດທ້າຍ ໃນວັນທີ 7 ມິຖຸນາ.

ທ່ານຍັງສາມາດ ປ້ອນບັດລົງຄະແນນ ທີ່ຫ້ອງການເລືອກຕັ້ງປະຈຳຄາວຕີ້ຂອງທ່ານ ຫຼື ບ່ອນລົງຄະແນນໃດໜຶ່ງ. ຄາວຕີ້ ສ່ວນໃຫ່ຍມີກ່ອງສົ່ງບັດທີ່ປອດໄພ ເຊິ່ງມີໃຫ້ ເລີ່ມແຕ່ຕົ້ນເດືອນພຶດສະພາ.

## ທາງເລືອກ 2 - ລົງຄະແນນໂດຍທີ່ທ່ານໄປເອງ

ວັນເລືອກຕັ້ງແມ່ນ ອັງຄານ, ວັນທີ 7 ມິຖຸນາ. ການລົງຄະແນນຈະເປີດແຕ່ເວລາ 7 ໂມງເຊົ້າ ຫາ 8 ໂມງແລງ ທ່ານສາມາດຊອກຫາບ່ອນລົງຄະແນນຂອງທ່ານທີ່ sos.ca.gov/elections/polling-place.

ຫລາຍໆຄາວຕີ້ກໍ່ຍັງໃຫ້ການລົງຄະແນນດ້ວຍຕົນເອງ ຈາກ ວັນເສົາ, ວັນທີ 28 ພຶດສະພາ ຈົນຮອດ ວັນອັງຄານ, ວັນທີ 7 ມິຖຸນາ. ກວດເບິ່ງກັບ ຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານ. ທ່ານສາມາດຊອກຫາບ່ອນລົງຄະແນນ ຫລື ກ່ອງສົ່ງບັດລົງຄະແນນທີ່ CAearlyvoting.sos.ca.gov.

ການລົງຄະແນນດ້ວຍຕົນເອງຈະງ່າຍກວ່າ, ນຳເອົາບັດລົງຄະແນນທີ່ທ່ານໄດ້ຮັບທາງໄປສະນີໄປທີ່ບ່ອນລົງຄະແນນຂອງທ່ານ.